ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 02 ສປປ

ລົງວັນທີ 23/5/96

# ລັດຖະບັນຍັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກ່ຽວກັບການເພີ້ມອັດຕາອາກອນຊົມໃຊ້
ນ້ຳມັນເຊື້ອໄຟ.

- ອີງຕາມລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ່ V ມາດຕາ 53, ຂໍ້ 1 ;

- ອີງຕາມມະຕິຕົກລົງຂອງກອງປະຊຸມ ເທື່ອທີ່ 8 ສະໄໝສາມັນ ຂອງສະພາແຫ່ງຊາດ ຊຸດທີ່ III ກ່ຽວກັບການຮັບຮອງເອົາແຜນການດັດແກ້ລາຍຮັບງົບປະມານແຫ່ງຊາດ ສຳລັບ 6 ເດືອນທ້າຍສົກ 1995-96 ຄັ້ງວັນທີ່ 25 ເມສາ 1996.

ປະທານປະເທດ

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະບັນຍັດ :

<u>ມາດຕາ 1</u> : ເພີ້ມອັດຕາອາກອນຊົມໃຊ້ນ້ຳມັນເຊື້ອໄຟ ໃສ່ກົດໝາຍສ່ວຍສາອາກອນ ມາດຕາ 23, ຂໍ້ 1 ຄືດັ່ງນີ້ :

- ນ້ຳມັນແອັດຊັງທຳມະດາ........................................ 15 ກີບ/ລິດ
- ນ້ຳມັນກາຊວນ.................................................... 10 ກີບ/ລິດ
- ນ້ຳມັນກາດຍົນ.................................................... 10 ກີບ/ລິດ

<u>ມາດຕາ 2</u> : ມອບໃຫ້ລັດຖະບານເປັນຜູ້ຈັດຕັ້ງປະຕິບັດລັດຖະບັນຍັດສະບັບນີ້ .

<u>ມາດຕາ 3</u> : ລັດຖະບັນຍັດສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ່ 23 ພຶດສະພາ 1996.

ປະທານປະເທດ.

ໜູຮັກ ພູມສະຫວັນ